ບົດອອກຂ່າວ

# ກອງປະຊຸມປຶກສາຫາລືກ່ຽວກັບ
# ການລົງທຶນຂອງເອກະຊົນທີ່ມີຄຸນນະພາບເພື່ອການພັດທະນາ

---

## "ກອງປະຊຸມປຶກສາຫາລືກ່ຽວກັບ
## ການລົງທຶນຂອງເອກະຊົນທີ່ມີຄຸນນະພາບເພື່ອການພັດທະນາ"

ໃນຕອນເຊົ້າຂອງວັນສຸກ, ວັນທີ 27 ຕຸລາ 2017: ກະຊວງແຜນການ ແລະ ການລົງທຶນໄດ້ຈັດກອງປະຊຸມປຶກສາຫາລືລະຫວ່າງພາກລັດ ແລະ ຄູ່ຮ່ວມພັດທະນາ ກ່ຽວກັບການລົງທຶນຂອງເອກະຊົນທີ່ມີຄຸນນະພາບສໍາລັບການພັດທະນາ ໂດຍການເປັນປະທານຮ່ວມກັນລະຫວ່າງ ທ່ານ ປອ ຄໍາລຽນ ພົນເສນາ, ຮອງລັດຖະມົນຕີ, ກະຊວງແຜນການ ແລະ ການລົງທຶນ, ແລະ ທ່ານທູດ ລີອົງ ພໍລ໌ ຟາເບີ, ຫົວໜ້າຫ້ອງການສະຫະພາບເອີຣົບປະຈໍາ ສປປ ລາວ. ມີ ພະນັກງານຂັ້ນສູງ ຈາກກະຊວງກ່ຽວຂ້ອງ, ບັນດາຄູ່ຮ່ວມພັດທະນາ, ຜູ້ຕາງໜ້າຈາກສະຖານທູດ, ຜູ້ຕາງໜ້າຈາກອົງການຈັດຕັ້ງສາກົນ ແລະ ຜູ້ຕາງໜ້າຈາກພາກເອກະຊົນ ເຂົ້າຮ່ວມທັງໝົດ 70 ກວ່າທ່ານ.

ທ່ານ ປອ ຄໍາລຽນ ພົນເສນາ, ຮອງລັດຖະມົນຕີ ກະຊວງແຜນການ ແລະ ການລົງທຶນ ໄດ້ກ່າວເປີດ ກອງປະຊຸມ ໂດຍໄດ້ກ່າວວ່າ: "ຈຸດປະສົງຂອງກອງປະຊຸມມື້ນີ້ກໍ່ເພື່ອປຶກສາຫາລື ລະຫວ່າງພາກລັດກັບ ຄູ່ຮ່ວມພັດທະນາໃນການຫັນການລົງທຶນໄປສູ່ຄຸນນະພາບ ລວມທັງການປັບປຸງຂັ້ນຕອນການອະນຸຍາດການລົງທຶນໃຫ້ກະທັດລັດ-ວ່ອງໄວ-ທັນການ ແລະ ໂປ່ງໃສ ລວມທັງການຕິດຕາມເບິ່ງແຍງສະພາບການລົງທຶນຂອງຜູ້ປະກອບການ. ລັດຖະບານມີໜ້າທີ່ອໍານວຍຄວາມສະດວກ ແລະ ແກ້ໄຂບັນຫາຊ່ວຍຜູ້ປະກອບການບໍ່ວ່າພາຍໃນ ກໍ່ຄືຕ່າງປະເທດ. ທັງໝົດນີ້ ກໍ່ເພື່ອເຮັດໃຫ້ບັນຫາກາດການລົງທຶນດີຂຶ້ນເລື້ອຍໆ, ເຮັດໃຫ້ການຈັດ ສປປ ລາວ ເປັນອັນດັບທີ 139 ໃນຈໍານວນ 190 ປະເທດທີ່ມີຄວາມສະດວກທາງດ້ານການດໍາເນີນທຸລະກິດໃຫ້ຫຼຸດລົງເຫຼືອອັນດັບທີຕໍ່າກວ່າ 100 ໃນອະນາຄົດອັນໃກ້ນີ້. ສິ່ງດັ່ງກ່າວເປັນສິ່ງທີ່ທ້າທາຍ ແລະ ຮຽກຮ້ອງໃຫ້ຫຼາຍຂະແໜງການຈະຕ້ອງໄດ້ປະສານງານກັນ ແລະ ເອົາຈິງເອົາຈັງປັບປຸງກົນໄກການບໍລິຫານທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງຕົນ..."

ໃນກອງປະຊຸມໄດ້ຮັບຟັງການສະເໜີກ່ຽວກັບຄວາມຄືບໜ້າກ່ຽວກັບການອະນຸມັດກົດໝາຍວ່າດ້ວຍການ ສົ່ງເສີມການລົງທຶນ ແລະ ຮ່າງຍຸດທະສາດການລົງທຶນແຫ່ງຊາດ ລວມທັງບັນດາເຄື່ອງມືສໍາລັບການຄຸ້ມຄອງການລົງທຶນທີ່ມີຄຸນນະພາບ (ໂດຍ: ກົມສົ່ງເສີມການລົງທຶນ). ແລະ ການສະເໜີກ່ຽວກັບຄວາມຄືບໜ້າກ່ຽວກັບການຜັນຂະຫຍາຍຜົນຂອງກອງປະຊຸມ ທຸລະກິດລາວ ຄັ້ງທີ 10 ໂດຍສະເພາະວຽກງານທີ່ຄິດພັນກັບການສ່ວຍສາອາກອນ ແລະ ການປະກອບສ່ວນຂອງພາກເອກະຊົນຢູ່ໃນການພັດທະນາປະເທດ ແລະ ພັນທະຕໍ່ກັບການປະກອບການລົງທຶນທີ່ມີຄຸນນະພາບ (ໂດຍ: ສະພາການຄ້າ ແລະ ອຸດສາຫະກໍາແຫ່ງຊາດ).

ນອກຈາກນີ້ ທ່ານ ຍັງໄດ້ໃຫ້ຮູ້ອີກວ່າ ໃນໄລຍະຜ່ານມາ, ລັດຖະບານແຫ່ງ ສປປ ລາວ ໄດ້ຮັບຮອງເອົາ ກົດໝາຍວ່າດ້ວຍການສົ່ງເສີມການລົງທຶນ ສະບັບປັບປຸງ ເລກທີ 14/ສພຊ ຄັ້ງວັນທີ 17 ພະຈິກ 2016, ແລະ ໄດ້ແຕ່ງຕັ້ງຄະນະຄຸ້ມຄອງການລົງທຶນແຫ່ງຊາດ ໂດຍມີ ທ່ານຮອງນາຍົກລັດຖະມົນຕີ ເປັນປະທານ. ພ້ອມນີ້, ກໍ່ໄດ້ມີການສ້າງຕັ້ງຫ້ອງການບໍລິການປະຕູດຽວ ຢູ່ພາຍໃຕ້ ກົມສົ່ງເສີມການລົງທຶນ, ກະຊວງແຜນການ ແລະ ການລົງທຶນ, ມີການຄົ້ນຄວ້າສ້າງຍຸດທະສາດການສົ່ງເສີມການລົງທຶນແຫ່ງຊາດ ທີ່ສັງລວມເອົາວຽກງານດ້ານຕ່າງໆ

ທີ່ຕິດພັນກັບວຽກງານການພັດທະນາການລົງທຶນພາກເອກະຊົນ ແລະ ການລົງທຶນເພື່ອການພັດທະນາ. ອີກດ້ານໜຶ່ງ, ກໍ່ໄດ້ມີການຈັດກອງປະຊຸມທຸລະກິດລາວຄັ້ງທີ 10 ເຊິ່ງໄດ້ສຳເລັດການປຶກສາຫາລືວຽກງານຫຼາຍດ້ານ ເປັນຕົ້ນແມ່ນແວດລ້ອມທາງດ້ານກົດໝາຍ (ເປັນຕົ້ນໄດ້ມີການທົບທວນກົດໝາຍວ່າດ້ວຍການຮ່ວມມືລະຫວ່າງລັດຖະບານ ແລະ ເອກະຊົນ (public-private partnership); ວຽກງານການສ່ວຍສາອາກອນ (ເປັນຕົ້ນການປະຕິຮູບການບໍລິຫານດ້ານການສ່ວຍສາອາກອນ), ຂັ້ນຕອນໃນການຂົນສົ່ງ ແລະ ການນຳເຂົ້າ/ສົ່ງອອກ; ການຈົດທະບຽນ/ອອກທະບຽນດຳເນີນທຸລະກິດ; ການເຂົ້າເຖິງແຫຼ່ງທຶນ (ການເງິນຈຸລະພາກ); ແລະ ການພັດທະນາຕະຫຼາດແຮງງານ.

ນອກນັ້ນ, ກອງປະຊຸມດັ່ງກ່າວ ຍັງໄດ້ຮັບຮູ້ເຖິງຄວາມສຳຄັນທາງດ້ານການພັດທະນາຄວາມຮູ້ທີ່ຕິດພັນກັບການລົງທຶນຂອງພາກເອກະຊົນທີ່ມີຄຸນນະພາບສຳລັບການພັດທະນາ. ໃນໄລຍະຜ່ານມາ, ລັດຖະບານໄດ້ເຜີຍແຜ່ຍຸດທະສາດການພັດທະນາມະນຸດ ພ້ອມທັງໄດ້ເພີ່ມທະວີການສະໜັບສະໜູນໃຫ້ແກ່ວຽກງານການສຶກສາ ແລະ ຊຸກຍູ້ການຮ່ວມມືເຊິ່ງກັນ ແລະ ກັນລະຫວ່າງທຸກພາກສ່ວນ ໂດຍສະເພາະພາກເອກະຊົນ. ທ່ານ ປອ ຄຳລຽນ ພົນເສນາ "ພວກເຮົາໄດ້ພະຍາຍາມສົ່ງເສີມການຮ່ວມມືລະຫວ່າງບໍລິສັດເອກະຊົນຕ່າງປະເທດ ແລະ ບໍລິສັດລາວ, ພ້ອມທັງເພີ່ມທະວີການຮ່ວມມືລະຫວ່າງສະຖາບັນຄົ້ນຄວ້າ ແລະ ສະຖາບັນພັດທະນາຕ່າງໆ".

ພ້ອມນັ້ນ, ທ່ານທູດ ລີອົງ ພໍລ໌ ຟາເບີ, ຫົວໜ້າຫ້ອງການສະຫະພາບເອີຣົບປະຈຳ ສປປ ລາວ ໄດ້ເນັ້ນໜັກເຖິງຄວາມສຳຄັນຂອງການປັບປຸງລະບຽບການໃຫ້ມີຄວາມກະທັດຮັດ ພ້ອມທັງສ້າງເງື່ອນໄຂເອື້ອອຳນວຍຄວາມສະດວກໃຫ້ແກ່ການເລີ່ມດຳເນີນທຸລະກິດ. ທ່ານຍັງໄດ້ກ່າວເຖິງການສ້າງຄວາມເຊື່ອໝັ້ນທາງດ້ານລະບຽບການ ແລະ ສ້າງຄວາມເຂົ້າໃຈກ່ຽວກັບລະບົບຍຸຕິທຳໃຫ້ແກ່ພາກທຸລະກິດ ເພື່ອສ້າງຄວາມເຊື່ອຖືທາງດ້ານລະບຽບການ ແລະ ດຶງດູດການລົງທຶນ. ພະນະ ທ່ານທູດ ລີອົງ ພໍລ໌ ຟາເບີ, ຫົວໜ້າຫ້ອງການສະຫະພາບເອີຣົບປະຈຳ ສປປ ລາວ ກ່າວວ່າ: "ພວກເຮົາຂໍສະແດງຄວາມຊົມເຊີຍໃຫ້ແກ່ລັດຖະບານໃນຄວາມພະຍາຍາມປັບປຸງແວດລ້ອມທາງດ້ານກົດໝາຍ ເຊິ່ງເປັນບາດກ້າວ ທຳອິດທີ່ມີຄວາມສຳຄັນຫຼາຍ ແຕ່ຕ້ອງຮັບປະກັນທາງດ້ານການຈັດຕັ້ງປະຕິບັດລະບຽບການນຳ. ເພື່ອປະຕິບັດໄດ້ດັ່ງກ່າວ, ການຍົກລະດັບຄວາມອາດສາມາດໃຫ້ແກ່ລັດຖະບານ ເປັນຕົ້ນແມ່ນການເຂົ້າເຖິງ ແລະ ການສື່ສານກັບບັນດາຜູ້ປະກອບການໃນ ສປປ ລາວ, ໂດຍສະເພາະແມ່ນທີ່ປຶກສາທາງດ້ານອາກອນຂອງບໍລິສັດຕ່າງໆ." ນອກນັ້ນ, ທ່ານຍັງໄດ້ຊີ້ໃຫ້ເຫັນເຖິງຄວາມສຳຄັນຂອງການປະຕິບັດຕາມມາດຕະຖານຕ່າງໆຂອງບັນດາປະເທດອາຊຽນ ເຊິ່ງເປັນສິ່ງໜຶ່ງທີ່ຈະຊ່ວຍສ້າງຄວາມສາມາດໃນການແຂ່ງຂັນຂອງລາວ.

ຜູ້ເຂົ້າຮ່ວມກອງປະຊຸມໄດ້ປະກອບຄຳເຫັນຢ່າງຫ້າວຫັນ ແລະ ສ້າງສັນ ແລະ ກອງປະຊຸມຄັ້ງນີ້ໄດ້ດຳເນີນໄປດ້ວຍຜົນສຳເລັດ ແລະ ປິດລົງໃນຕອນທ່ຽງຂອງມື້ດຽວກັນດ້ວຍຢ່າງຈົບງາມ.

ຕິດຕໍ່ຂໍ້ມູນໄດ້ທີ່:

| | |
|---|---|
| ທ່ານ ບຸນຖະໜອມ ເມກດາລາ<br>ພະແນກເອີຣົບ-ອາເມລິກາ<br>ກົມຮ່ວມມື, ກຜທ | ທ່ານ ນ. ວີນາ ໂງ່ນວໍຣະຣາດ<br>ພະນັກງານດ້ານການສື່ສານ ແລະ ສະໜັບສະໜູນດ້ານວິຊາການໃຫ້ແກ່ການຈັດຕັ້ງປະຕິບັດແຜນພັດທະນາເສດຖະກິດ-ສັງຄົມ 5 ປີ ຄັ້ງທີ VIII<br>ໜ່ວຍງານໂຄງການ, ກົມຮ່ວມມື, ກຜທ |

| | |
|---|---|
| ມືຖື: 020 2244 8892 | ມືຖື: 020 7786 3939, ອີເມວ: venang@gmail.com |